**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ............/ລບ

ນະຄອນຫຼວງວຽງຈັນ, ວັນທີ........................

# "ຮ່າງ"

# ດຳລັດ

# ວ່າດ້ວຍທີ່ດິນກະສິກຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ......../ກປ, ລົງວັນທີ..........

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານທີ່ດິນກະສິກຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ແນໃສ່ຮັບປະກັນການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ຖືກຕ້ອງຕາມເປົ້າໝາຍ ຮັບປະກັນການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ແລະ ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຕາມທິດກະສິກຳສະອາດ ສີຂຽວ ແລະ ຍືນຍົງ.

### ມາດຕາ 2 ທີ່ດິນກະສິກຳ

ທີ່ດິນກະສິກຳ ແມ່ນ ທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ, ປະມົງ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ດິນທີ່ມີຄວາມອຸດົມສົມບູນ** ໝາຍເຖິງ ດິນທີ່ມີຄຸນສົມບັດທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ທີ່ພຽງພໍສຳລັບການຈະເລີນເຕີບໂຕຂອງພືດ;

2. **ການເຊື່ອມໂຊມຂອງດິນ** ໝາຍເຖິງ ການຫຼຸດລົງຂອງຄຸນສົມບັດທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ເນື່ອງຈາກການກະທຳຂອງມະນຸດ ຫຼື ເກີດຈາກການປ່ຽນແປງທາງທຳມະຊາດ;

3. **ຝຸ່ນ (fertilizer)** ໝາຍເຖິງ ວັດຖຸມີສ່ວນປະກອບທາງເຄມີ ທີ່ຈຳເປັນສຳລັບການຈະເລີນເຕີບໂຕ ແລະ ເພີ່ມຜົນຜະລິດຂອງພືດ ຊຶ່ງລວມມີ 2 ກຸ່ມຝຸ່ນຫຼັກຄື: ຝຸ່ນອານົງຄະທາດ ຫຼື ຝຸ່ນເຄມີ (Inorganic fertilizer), ຝຸ່ນອົງຄະທາດ (Organic fertilizer) ລວມທັງຝຸ່ນຊີວະພາບ (biofertilizer);

4. **ຝຸ່ນອານົງຄະທາດ ຫຼື ຝຸ່ນເຄມີ (Inorganic fertilizer)** ໝາຍເຖິງ ຝຸ່ນທີ່ໄດ້ຈາກຂະບວນການສັງເຄາະທາງເຄມີ ທີ່ມີການກຳນົດທາດອາຫານຫຼັກຂອງພືດ ໃນພາສະນະບັນຈຸເປັນຕົ້ນ ແມ່ນທາດໄນໂຕຣເຈນ (N), ຟົດສະຟໍຣັສ (P) ແລະ ໂພແຕຊຽມ (K);

5. **ຝຸ່ນອົງຄະທາດ (Organic fertilizer)** ໝາຍເຖິງ ຝຸ່ນທີ່ໄດ້ຈາກສິ່ງເສດເຫຼືອຂອງພືດ, ສັດ, ດິນອິນຊີ (Peat ຫຼື Organic soil) ເປັນຕົ້ນສິ່ງເສດເຫຼືອຈາກກະສິກຳ, ມູນສັດລ້ຽງ, ມູນເຈຍ ການນຳມາຜ່ານຂະບວນການແປຮູບ (ບົ່ມ ຫຼື ໝັກ) ຕາມຫຼັກວິຊາການ;

6. **ຝຸ່ນຊີວະພາບ (biofertilizer)** ໝາຍເຖິງ ຝຸ່ນທີ່ມີການປະສົມຫົວເຊື້ອຈຸລິນຊີ ຫຼື ບັກແຕເຣຍ ຊະນິດໃດໜຶ່ງ ຫຼື ຫຼາຍຊະນິດ ຕາມຄວາມຕ້ອງການຂອງຜູ້ນຳໃຊ້ ຊຶ່ງມີເປົ້າໝາຍ ສົ່ງເສີມ ຫຼື ກະຕຸ້ນການເປັນປະໂຫຍດຂອງຝຸ່ນຕໍ່ພືດຫຼາຍຂຶ້ນ ແລະ ປ້ອງກັນການຕິດເຊື້ອຂອງຮາກພືດ.

**ມາດຕາ 4 ຫຼັກການພື້ນຖານ ກ່ຽວກັບວຽກງານ ທີ່ດິນກະສິກຳ**

ວຽກງານທີ່ດິນກະສິກຳ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ການຄຸ້ມຄອງທີ່ດິນກະສິກຳ, ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນຄວາມໝັ້ນຄົງຂອງທີ່ດິນກະສິກຳ ຕໍ່ການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ;

4. ຮັບປະກັນການນຳໃຊ້ທີ່ດິນກະສິກຳ ໃຫ້ເກີດຜົນປະໂຫຍດສູງສຸດ, ບໍ່ສ້າງຜົນກະທົບອັນບໍ່ດີ ຕໍ່ຄຸນນະພາບດິນ, ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ;

5. ປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ຢ່າງກົມກຽວ ແລະ ມີປະສິດທິຜົນ ໂດຍການມີສ່ວນຮ່ວມຂອງປະຊາຊົນ;

6. ສອດຄ່ອງກັບ ສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວຂ້ອງກັບທີ່ດິນກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ການສຳຫຼວດທີ່ດິນກະສິກຳ

**ມາດຕາ 6 ການສຳຫຼວດທີ່ດິນກະສິກຳ**

ການສຳຫຼວດທີ່ດິນກະສິກຳ ແມ່ນ ການເກັບກຳຂໍ້ມູນ, ເກັບຕົວຢ່າງ ແລະ ວິໄຈ, ປະເມີນຄຸນນະພາບຂອງດິນກະສິກຳ ເພື່ອການຈັດແບ່ງປະເພດດິນ ທີ່ມີຄວາມເໝາະສົມຕໍ່ການຜະລິດກະສິກຳ.

**ມາດຕາ 7 ການເກັບກຳຂໍ້ມູນທີ່ດິນກະສິກຳ**

ການເກັບກຳຂໍ້ມູນທີ່ດິນກະສິກຳ ແມ່ນ ການເກັບກຳຂອບເຂດ, ເນື້ອທີ່ດິນ, ສະພາບການນຳໃຊ້ທີ່ດິນ, ລັກສະນະທາງພູມສັນຖານ, ຮູບປະພັນ, ຄຸນລັກສະນະທາງກາຍະພາບຂອງດິນ ແລະ ການປ່ຽນແປງການນຳໃຊ້ທີ່ດິນ ລວມທັງທ່າແຮງ ແລະ ຂໍ້ຈຳກັດຕ່າງໆ ຂອງດິນກະສິກຳ.

**ມາດຕາ 8 ການເກັບຕົວຢ່າງ ແລະ ວິໄຈດິນ**

ການເກັບຕົວຢ່າງ ແລະ ວິໄຈດິນ ແມ່ນ ການເກັບຕົວຢ່າງດິນ ໃນພື້ນທີ່ດິນກະສິກຳ ມາວິໄຈ ຊອກຮູ້ຄຸນສົມບັດທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາຂອງດິນ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການຈຳແນກດິນ, ການນຳໃຊ້ດິນກະສິກຳ ເຂົ້າໃນການຜະລິດ ແລະ ວາງແຜນການນຳໃຊ້ທີ່ດິນທີ່ມີປະສິດທິຜົນ.

**ມາດຕາ 9 ການວິໄຈຄຸນສົມບັດທາງເຄມີ**

ການວິໄຈຄຸນສົມບັດທາງເຄມີ ແມ່ນ ການໃຊ້ວິທີການທາງວິທະຍາສາດ ເພື່ອຊອກຫາປະລິມານ ທາດທີ່ບັນຈຸໃນດິນ ເປັນຕົ້ນ ຄ່າຄວາມເປັນກົດ-ດ່າງ **(pH)**, ການຊັກນຳໄຟຟ້າ **(EC)**, ຄວາມເຄັມຂອງດິນ, ຄວາມສາມາດໃນການແລກປ່ຽນທາດໄອອອນບວກ **(CEC)**, ອິນຊີວັດຖຸ (OM), ທາດໄນໂຕຣເຈນ (N), ຟົດສະຟໍຣັສ (P), ໂພແຕຊຽມ (K).

**ມາດຕາ 10 ການວິໄຈຄຸນສົມບັດທາງຟີຊິກ**

ການວິໄຈຄຸນສົມບັດທາງຟີຊິກ ແມ່ນ ການນຳໃຊ້ວິທີການທາງວິທະຍາສາດ ເພື່ອຊອກຮູ້ ລັກສະນະ, ອົງປະກອບ ແລະ ການເຄື່ອນເໜັງພາຍໃນຂອງດິນ, ເປັນຕົ້ນ ເນື້ອດິນ, ອັດຕາສ່ວນເມັດດິນ, ຄວາມໜາແໜ້ນຂອງດິນ, ປະລິມານຄວາມຊຸ່ມ, ຄວາມສາມາດໃນການຊຶມນໍ້າ, ສີ, ສິ່ງເຈືອປົນໃນຝຸ່ນ, ຄວາມຊຸ່ມຂອງນໍ້າ.

**ມາດຕາ 11 ການວິໄຈຄຸນສົມບັດທາງຊີວະວິທະຍາ**

ການວິໄຈຄຸນສົມບັດທາງຊີວະວິທະຍາ ແມ່ນ ການນຳໃຊ້ວິທີການທາງວິທະຍາສາດ ເພື່ອຊອກຮູ້ຊື່, ປະລິມານ, ຄຸນນະພາບ ແລະ ຄຸນປະໂຫຍດຂອງສິ່ງມີຊີວິດໃນດິນ.

**ມາດຕາ 12 ການປະເມີນຄຸນນະພາບດິນກະສິກຳ**

ການປະເມີນຄຸນນະພາບດິນກະສິກຳ ແມ່ນ ການປະເມີນທ່າແຮງ ແລະ ຂໍ້ຈຳກັດຂອງດິນ ທາງດ້ານ ເຄມີ, ຟີຊິກ, ຊີວະວິທະຍາ ແລະ ລັກສະນະທີ່ຕັ້ງພູມສັນຖານຂອງດິນ ເພື່ອເປົ້າໝາຍການນຳໃຊ້.

**ມາດຕາ 13 ການຈັດແບ່ງປະເພດດິນກະສິກຳ**

ການຈັດແບ່ງປະເພດດິນກະສິກຳ ແມ່ນ ການແບ່ງເຂດດິນທີ່ມີຄວາມເໝາະສົມ ຕໍ່ກັບການຜະລິດກະສິກຳ ເພື່ອຕອບສະໜອງຕໍ່ການວາງແຜນການນຳໃຊ້ດິນຂອງທ້ອງຖິ່ນ ໂດຍອີງໃສ່ຂໍ້ມູນທາງດ້ານເຄມີ, ຟີຊິກ, ຊີວະວິທະຍາ ແລະ ລັກສະນະທີ່ຕັ້ງພູມສັນຖານຂອງດິນ ລວມທັງສະພາບພູມອາກາດ ໂດຍການປຽບທຽບ ລະຫວ່າງ ມາດຖານຄວາມຕ້ອງການ ໃນການຈະເລີນເຕີບໂຕຂອງພືດໃນດິນ.

## ໝວດທີ 3
## ການກຳນົດ ປະເພດການນຳໃຊ້ທີ່ດິນກະສິກຳ

**ມາດຕາ 14 ການກຳນົດ ປະເພດການນຳໃຊ້ທີ່ດິນກະສິກຳ**

ການກຳນົດ ປະເພດການນຳໃຊ້ທີ່ດິນກະສິກຳ ແມ່ນ ການຈັດແບ່ງຂອບເຂດທີ່ດິນ ສຳລັບປູກເຂົ້າ, ປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ, ປູກໄມ້ໃຫ້ໝາກ, ການລ້ຽງສັດ ແລະ ການປະມົງ, ຊົນລະປະທານ, ການຄົ້ນຄວ້າທົດລອງ ໂດຍອີງໃສ່ສະພາບພູມສັນຖານ, ຄຸນລັກສະນະຂອງດິນ, ພູມອາກາດ ແລະ ຈຸດພິເສດໃນແຕ່ລະທ້ອງຖິ່ນ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ດຳເນີນການກຳນົດປະເພດດິນ ແລະ ສ້າງແຜນທີ່ດິນກະສິກຳ.

**ມາດຕາ 15 ທີ່ດິນປູກເຂົ້າ**

ທີ່ດິນປູກເຂົ້າ ແມ່ນ ພື້ນທີ່ດິນ ທີ່ກວ້າງຂວາງ, ຮາບພຽງ, ມີຄວາມຄ້ອຍຊັນແຕ່ ສູນ ຫາ ສາມສິບຫ້າ ອົງສາ ມີຄວາມເໝາະສົມ ຕໍ່ການປູກເຂົ້າ ແລະ ພືດສະບຽງອື່ນໆ ຊຶ່ງນອນໃນ ສາມ ລັກສະນະ ຄື:

1. ທີ່ດິນປູກເຂົ້າ ໃນເຂດພື້ນທີ່ຮາບພຽງ, ກວ້າງຂວາງ, ມີຄວາມຄ້ອຍຊັນ ບໍ່ເກີນ ຫ້າ ອົງສາ ດິນສາມາດເກັບຮັກສານ້ຳໄວ້ໄດ້ດີ ມີເງື່ອນໄຂສະໜອງນ້ຳພຽງພໍ ເປັນຕົ້ນ ພື້ນທີ່ນາທີ່ນອນໃນ ເຈັດ ທົ່ງພຽງໃຫຍ່, ສິບຫົກທົ່ງພຽງກາງ ແລະ ສິບສອງ ທົ່ງພຽງນ້ອຍ;

2. ທີ່ດິນປູກເຂົ້າ ໃນພື້ນທີ່ໂນນ ມີຄວາມຄ້ອຍຊັນແຕ່ ຫ້າ ຫາ ສາມສິບຫ້າ ອົງສາ ມີເງື່ອນໄຂການສະໜອງນ້ຳພຽງພໍ ມີຄວາມເໝາະສົມ ຕໍ່ການປູກເຂົ້ານາຂັ້ນໄດ;

3. ທີ່ດິນປູກເຂົ້າ ໃນພື້ນທີ່ໂນນ ມີຄວາມຄ້ອຍຊັນແຕ່ ຫ້າ ຫາ ສາມສິບຫ້າ ອົງສາ ແຕ່ບໍ່ມີເງື່ອນໄຂສະໜອງນ້ຳໄດ້ ອາໃສນ້ຳຝົນເປັນຫຼັກ ມີຄວາມເໝາະສົມ ຕໍ່ການປູກເຂົ້າເນີນສູງ ຫຼື ເຂົ້າໄຮ່.

**ມາດຕາ 16 ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ**

ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ແມ່ນ ພື້ນທີ່ດິນລຸບໂນນເລັກໜ້ອຍ ກ້ວາງຂວາງ, ມີຄວາມຄ້ອຍຊັນບໍ່ເກີນ ສິບຫ້າ ອົງສາ, ເປັນດິນທີ່ລະບາຍນ້ຳດີ, ມີລະບົບນິເວດ ວິທະຍາທີ່ມີຄວາມເໝາະສົມ ຕໍ່ການຈະເລີນເຕີບໂຕຂອງພືດ.

**ມາດຕາ 17 ທີ່ດິນປູກໄມ້ໃຫ້ໝາກ**

ທີ່ດິນ ປູກໄມ້ໃຫ້ໝາກ ແມ່ນ ພື້ນທີ່ດິນໂນນ, ສູງຊັນເລັກໜ້ອຍ ຫາ ປານກາງ ທີ່ມີຄວາມຄ້ອຍຊັນ ບໍ່ເກີນ ສາມສິບຫ້າ ອົງສາ, ເປັນຊັ້ນດິນເລິກ, ເປັນດິນທີ່ລະບາຍນໍ້າດີ, ມີລະບົບນິເວດ ວິທະຍາມີທີ່ເໝາະສົມຕໍ່ການຈະເລີນເຕີບໂຕ ຂອງແຕ່ລະຊະນິດໄມ້ໃຫ້ໝາກ.

**ມາດຕາ 18 ທີ່ດິນລ້ຽງສັດ ແລະ ປະມົງ**

ທີ່ດິນລ້ຽງສັດ ແມ່ນ ທີ່ດິນ ທົ່ງຫຍ້າຕາມທຳມະຊາດ, ພື້ນທີ່ເປັນປ່າຕໍ່າ, ປ່າພຸ່ມ, ປ່າໂຄກຫ່າງ ຊຶ່ງເປັນຊັ້ນດິນຕື້ນ ດິນມີຫີນເຈືອປົນ ຕາມໜ້າດິນ ລວມທັງທີ່ດິນທີ່ມີນໍ້າຖ້ວມຂັງໃນລະດູຝົນ ທີ່ມີລະດັບຄວາມຄ້ອຍຊັນ ຊາວຫ້າ ອົງສາ ລົງມາ.

ທີ່ດິນ ປະມົງ ແມ່ນ ທີ່ດິນບໍລິເວນນໍ້າ ທີ່ມີຄວາມເໝາະສົມຕໍ່ການປະມົງ ເປັນຕົ້ນທີ່ດິນອ່າງເກັບນໍ້າ, ທີ່ດິນບຶງ, ໜອງຕາມທຳມະຊາດ ແລະ ໜອງຂຸດເອງ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນຳໃຊ້ເຂົ້າໃນການປະມົງ.

**ມາດຕາ 19 ທີ່ດິນສຳລັບເຂດຊົນລະປະທານ**

ທີ່ດິນສຳລັບເຂດທີ່ຊົນລະປະທານ ແມ່ນ ພື້ນທີ່ດິນ ທີ່ນຳໃຊ້ສຳລັບການຊົນລະປະທານ ຊຶ່ງປະກອບມີ ທີ່ດິນຫົວງານ, ອ່າງເກັບນໍ້າ, ລະບົບຄອງທົດ, ລະບົບຄອງລະບາຍ ທີ່ສາມາດສະໜອງນໍ້າໄດ້ ໃນປະຈຸບັນ ແລະ ຈະຂະຫຍາຍຕໍ່ໄປຕາມການສຶກສາ, ສຳຫຼວດ-ອອກແບບ ໂດຍມີຫຼັກເຂດກັນຊົນກຳນົດໄວ້.

**ມາດຕາ 20 ດິນສຳລັບເຂດການຄົ້ນຄວ້າທົດລອງ ດ້ານກະສິກຳ**

ທີ່ດິນສຳລັບເຂດການຄົ້ນຄວ້າທົດລອງ ດ້ານກະສິກຳ ແມ່ນ ທີ່ດິນທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ ເຂົ້າໃນການຄົ້ນຄວ້າທົດລອງ ດ້ານເຕັກນິກວິທະຍາສາດ ກ່ຽວກັບກະສິກຳ ເປັນຕົ້ນ ທີ່ດິນສູນຄົ້ນຄວ້າທົດລອງ, ທີ່ດິນແຫຼ່ງພັນທຸກຳພືດ, ສັດ, ປາ ແລະ ສັດນໍ້າ.

**ມາດຕາ 21 ການສ້າງແຜນທີ່ດິນກະສິກຳ**

ການສ້າງແຜນທີ່ດິນກະສິກຳ ແມ່ນ ຂະບວນການທາງດ້ານເຕັກນິກ ທີ່ນຳໃຊ້ຂໍ້ມູນພູມິສາດ, ຂໍ້ມູນດິນ, ການນຳໃຊ້ທີ່ດິນ, ຂໍ້ມູນການປູກພືດ ແລະ ອື່ນໆ ເພື່ອປະກອບສ້າງເປັນແຜນທີ່ ເປັນຕົ້ນ ແຜນທີ່ດິນ, ແຜນທີ່ການນຳໃຊ້ທີ່ດິນກະສິກຳ, ແຜນທີ່ຄວາມເໝາະສົມ ຂອງທີ່ດິນສຳລັບການປູກພືດ, ແຜນທີ່ການປະເມີນຄຸນນະພາບດິນ, ແຜນທີ່ວາງແຜນນຳໃຊ້ທີ່ດິນກະສິກຳ.

ມາດຕາສ່ວນ ຂອງແຜນທີ່ດິນກະສິກຳ ປະກອບມີ:

1. ລະດັບຊາດ: 1:1.000.000 ຫາ 1:500.000
2. ລະດັບແຂວງ: 1:250.000 ຫາ 1:100.000
3. ລະດັບເມືອງ: 1:50.000 ຫາ 1:25.000
4. ລະດັບບ້ານ: 1:10.000 ຫາ 1:5.000
5. ນ້ອຍກວ່າລະດັບບ້ານ ຕໍ່າກວ່າ 1:5.000

## ໝວດທີ 4
## ການວາງແຜນນຳໃຊ້ທີ່ດິນກະສິກຳ

**ມາດຕາ 22 ການວາງແຜນນຳໃຊ້ທີ່ດິນກະສິກຳ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດຳເນີນການວາງແຜນນຳໃຊ້ທີ່ດິນກະສິກຳ ໃຫ້ສອດຄ່ອງ ກັບແຜນພັດທະນາ ເສດຖະກິດສັງຄົມ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດຢູ່ໃນລະດັບຂັ້ນບ້ານ, ເມືອງ ແລະ ແຂວງ.

**ມາດຕາ 23 ການວາງແຜນນຳໃຊ້ທີ່ດິນກະສິກຳຂັ້ນບ້ານ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນເຈົ້າການ ປະສານກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ຂະແໜງການອື່ນຂັ້ນເມືອງ, ອົງການປົກຄອງບ້ານ, ຊາວບ້ານເຂົ້າຮ່ວມດຳເນີນ ການວາງແຜນນຳໃຊ້ທີ່ດິນກະສິກຳ ແລ້ວ ສະເໜີໃຫ້ທ່ານເຈົ້າເມືອງຮັບຮອງ.

**ມາດຕາ 24 ການວາງແຜນນຳໃຊ້ທີ່ດິນກະສິກຳຂັ້ນເມືອງ**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນເຈົ້າການ ປະສານກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຂະແໜງການອື່ນຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການຊັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເຂົ້າຮ່ວມດຳເນີນ ການວາງແຜນນຳໃຊ້ທີ່ດິນກະສິກຳ ແລ້ວ ສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ຮັບຮອງ.

**ມາດຕາ 25 ການວາງແຜນນຳໃຊ້ທີ່ດິນກະສິກຳຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໂດຍສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້, ປະສານກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຂະແໜງການອື່ນຂັ້ນແຂວງ ແລະ ເມືອງ ເຂົ້າຮ່ວມດຳເນີນ ການວາງແຜນນຳໃຊ້ທີ່ດິນກະສິກຳ ແລ້ວ ສະເໜີໃຫ້ສະພາປະຊາຊົນຂັ້ນແຂວງ ຮັບຮອງ.

## ໝວດທີ 5
## ການປົກປັກຮັກສາ ທີ່ດິນກະສິກຳ

**ມາດຕາ 26 ການປົກປັກຮັກສາທີ່ດິນກະສິກຳ**

ການປົກປັກຮັກສາທີ່ດິນກະສິກຳ ແມ່ນ ການສະຫງວນທີ່ດິນກະສິກຳ, ການຮັກສາຄຸນນະພາບຂອງດິນກະສິກຳ, ການກຳນົດເຂດປູກພືດ ທີ່ມີເອກະລັກສະເພາະ, ການປ້ອງກັນການເຊາະເຈື່ອນ, ການປັກຫຼັກໝາຍທີ່ດິນກະສິກຳ, ການຫັນປ່ຽນທີ່ດິນກະສິກຳ.

**ມາດຕາ 27 ການສະຫງວນທີ່ດິນກະສິກຳ**

ການສະຫງວນທີ່ດິນກະສິກຳ ແມ່ນ ການອະນຸລັກສະຫງວນໄວ້ ເນື້ອທີ່ດິນກະສິກຳ ສີ່ລ້ານຫ້າແສນເຮັກຕາ ທີ່ໄດ້ກຳນົດໄວ້ ໃນແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ບໍ່ອະນຸຍາດໃຫ້ຫັນປ່ຽນທີ່ດິນກະສິກຳ ໃນເຂດພື້ນທີ່ ທີ່ມີລັກສະນະພິເສດ ແລະ ສຳຄັນເປັນຕົ້ນ:

1. ທີ່ດິນນາທີ່ນອນຢູ່ໃນ ເຈັດ ທົ່ງພຽງໃຫຍ່, ສິບຫົກ ທົ່ງພຽງກາງ ແລະ ສິບສອງ ທົ່ງພຽງນ້ອຍ;

2. ທີ່ດິນເຂດຮັບນໍ້າຊົນລະປະທານ;

3. ເຂດທີ່ດິນມີຄຸນລັກສະນະສະເພາະ ແລະ ເໝາະສົມສໍາລັບການປູກພືດ ຫຼື ຕົ້ນໄມ້ຊະນິດໃດໜຶ່ງ ທີ່ບໍ່ສາມາດປູກໄດ້ໃນເຂດອື່ນໆ;

4. ເຂດການລ້ຽງສັດ ແລະ ການປະມົງທີ່ມີລັກສະນະສະເພາະ;

5. ເຂດທີ່ດິນ ສໍາລັບການຄົ້ນຄ້ວາທົດລອງກະສິກໍາ;

6. ດິນນາທີ່ນອນໃນ ເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ.

**ມາດຕາ 28 ການຮັກສາຄຸນນະພາບຂອງດິນກະສິກໍາ**

ການຮັກສາຄຸນນະພາບຂອງດິນກະສິກໍາ ແມ່ນ ການບູລະນະປັບປຸງບໍາລຸງດິນ ໃຫ້ມີຄວາມອຸດົມສົມບູນດີ, ບໍ່ໃຫ້ມີການເຊາະເຈື່ອນສູນເສຍ, ເຊື່ອມໂຊມ, ບໍ່ໃຫ້ມີສານເຄມີເປັນພິດຕົກຄ້າງ ແລະ ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 29 ການກໍານົດເຂດປູກພືດທີ່ມີເອກະລັກສະເພາະ**

ການກໍານົດເຂດປູກພືດ ທີ່ມີເອກະລັກສະເພາະ ແມ່ນ ການກໍານົດເອົາເຂດພື້ນທີ່ດິນ ທີ່ມີຄຸນລັກສະນະພິເສດ ທາງດ້ານພູມສັນຖານ, ລະບົບນິເວດ ຊຶ່ງເປັນເອກະລັກສະເພາະຂອງທ້ອງຖິ່ນ ເປັນຕົ້ນ ເຂດທີ່ເໝາະສົມໃນການປູກ ເຂົ້າໄກ່ນ້ອຍ, ໂສມ, ກາເຟ, ຊາ, ພືດເປັນຢາ.

ຂະແໜງກະສິກໍາ ແລະ ປ່າໄມ້ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອີງການປົກຄອງທ້ອງຖິ່ນ ຄົ້ນຄວ້າ, ພິຈາລະນາ, ນໍາສະເໜີລັດຖະບານ ຢັ້ງຢືນ, ຮັບຮອງຕາມລະບຽບການ.

**ມາດຕາ 30 ການປ້ອງກັນການເຊາະເຈື່ອນ**

ການປ້ອງກັນການເຊາະເຈື່ອນ ແມ່ນ ການປົກປັກຮັກສາທີ່ດິນກະສິກໍາ ບໍ່ໃຫ້ຖືກເຊາະເຈື່ອນ ໂດຍການນໍາໃຊ້ເຕັກນິກ ວິທີການທີ່ເໝາະສົມ ເປັນຕົ້ນ ການກຽມດິນທີ່ຖືກວິທີ, ການປູກພືດຄຸມດິນ, ປູກພືດສະຫຼັບ, ປູກພືດຕາມແລວລະດັບ, ສ້າງແລວຄັນດິນ ແລະ ຄັນພືດ, ຫຼີກລ້ຽງການນໍາໃຊ້ກົນຈັກໜັກຕໍ່ການກຽມດິນໃນພື້ນທີ່ຄ້ອຍຊັນ.

**ມາດຕາ 31 ການປັກຫຼັກໝາຍທີ່ດິນກະສິກໍາ**

ການປັກຫຼັກໝາຍທີ່ດິນກະສິກໍາ ແມ່ນ ການກໍານົດເຂດເພື່ອສະຫງວນ ທີ່ດິນກະສິກໍາ ທີ່ເປັນບູລິມະສິດ ເປັນຕົ້ນ ພື້ນທີ່ ດິນກະສິກໍາເຂດຮັບນໍ້າຊົນລະປະທານ, ດິນທີ່ມີຄວາມອຸດົມສົມບູນດີ, ດິນທີ່ມີເອກະລັກສະເພາະ ດິນສໍາລັບການຄົ້ນຄວ້າທົດລອງດ້ານກະສິກໍາ ໂດຍອີງໃສ່ ຜົນການວາງແຜນນໍາໃຊ້ທີ່ດິນກະສິກໍາ.

ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ດໍາເນີນການປັກຫຼັກໝາຍເຂດທີ່ດິນກະສິກໍາ.

**ມາດຕາ 32 ການຫັນປ່ຽນທີ່ດິນກະສິກໍາ**

ການຫັນປ່ຽນທີ່ດິນກະສິກໍາ ແມ່ນ ການນໍາໃຊ້ທີ່ດິນໄປສູ່ເປົ້າໝາຍອື່ນ ທີ່ເຫັນວ່າມີຄວາມຈໍາເປັນ ແລະ ເກີດປະໂຫຍດສູງສຸດ. ການຫັນປ່ຽນ ຕ້ອງໄດ້ຮັບການຕິດຕາມກວດກາ ແລະ ປະເມີນ ສະຖານະພາບຂອງດິນ

ຈາກພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຕາມ ລະບຽບການ, ກົດໝາຍທີ່ດິນ (ມາດຕາ ຊາວແປດ, ຊາວເກົ້າ, ສາມສິບ) ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຮ່ວມກັນຕິດຕາມປະເມີນ ແລະ ລາຍງານສະພາບການຂໍຫັນປ່ຽນຕໍ່ຂັ້ນເທິງ.

## ໝວດທີ 6
## ການພັດທະນາທີ່ດິນກະສິກຳ

### ມາດຕາ 33 ການພັດທະນາທີ່ດິນກະສິກຳ

ການພັດທະນາທີ່ດິນກະສິກຳ ແມ່ນ ການນຳໃຊ້ດິນເຂົ້າໃນ ການປູກ ການລ້ຽງ ຢ່າງມີປະສິດທິຜົນ ທັງຮັບປະກັບຄວາມຍືນຍົງ ໂດຍການນຳໃຊ້ເຕັກນິກ ວິທີການທີ່ເໝາະສົມກັບດິນແຕ່ລະເຂດ ເປັນຕົ້ນ ການປັບປຸງດິນກະສິກຳ, ການຟື້ນຟູທີ່ດິນກະສິກຳ, ການນຳໃຊ້ຝຸ່ນ, ການອະນຸລັກຄວາມອຸດົມສົມບູນຂອງດິນກະສິກຳ, ການນຳໃຊ້ດິນທົດລອງ ແລະ ສາທິດອັດຕາຝຸ່ນ, ການສ້າງຕົວແບບ ການຈັດການດິນ, ນ້ຳ ແລະ ຝຸ່ນ ແລະ ການສ້າງອາສາສະໝັກໝໍດິນ.

### ມາດຕາ 34 ການປັບປຸງດິນກະສິກຳ

ການປັບປຸງດິນກະສິກຳ ແມ່ນ ການນຳໃຊ້ປັດໄຈການຜະລິດ, ນຳໃຊ້ເຕັກນິກ ແລະ ວິທີການຕ່າງໆ ທີ່ເໝາະສົມ ເຮັດໃຫ້ດິນມີຄວາມອຸດົມສົມບູນ, ສາມາດຕອບສະໜອງ ທາດອາຫານໃຫ້ພືດຢ່າງພຽງພໍ ແນໃສ່ເພີ່ມສະມັດຕະພາບການຜະລິດ ຕໍ່ຫົວໜ່ວຍພື້ນທີ່ ແລະ ສາມາດນຳໃຊ້ທີ່ດິນຢ່າງຍືນຍົງ.

### ມາດຕາ 35 ການຟື້ນຟູດິນກະສິກຳ

ການຟື້ນຟູດິນກະສິກຳ ແມ່ນ ການແກ້ໄຂຜົນກະທົບ ຫຼື ການເຊື່ອມໂຊມຂອງດິນ ທີ່ເກີດຈາກການກະທຳຂອງມະນຸດ ຫຼື ທຳມະຊາດ ໃຫ້ກັບຄືນສູ່ສະພາບເດີມ ແລະ ສາມາດນຳໃຊ້ເຂົ້າໃນການຜະລິດ ຢ່າງມີປະສິດທິຜົນດ້ວຍການນຳໃຊ້ເຕັກນິກ ແລະ ວິທີການ ທາງວິທະຍາສາດທີ່ເໝາະສົມ ເຂົ້າໃນການຟື້ນຟູ ຫຼື ປ່ອຍໃຫ້ດິນຟື້ນຟູຕາມທຳມະຊາດ ດ້ວຍຕົວມັນເອງ.

### ມາດຕາ 36 ການນຳໃຊ້ຝຸ່ນ

ການນຳໃຊ້ຝຸ່ນ ແມ່ນ ການເພີ່ມທາດອາຫານພືດ ໃນດິນແຕ່ລະເຂດ ທີ່ມີຄວາມແຕກຕ່າງກັນ ໂດຍປະຕິບັດຕາມ ເຕັກນິກວິຊາການ ຢ່າງເຄັ່ງຄັດ ເປັນຕົ້ນ ນຳໃຊ້ຝຸ່ນ (ຝຸ່ນອານົງຄະທາດ, ຝຸ່ນອົງຄະທາດ ແລະ ຝຸ່ນຊີວະພາບ)ໃຫ້ຖືກຕາມ ສູດຝຸ່ນ, ອັດຕາ, ເວລາ ແລະ ວິທີການໃສ່ ຕໍ່ກັບດິນ ແລະ ພືດ ເພື່ອເຮັດໃຫ້ການນຳໃຊ້ມີປະສິດທິພາບ, ຮັບປະກັນບໍ່ໃຫ້ເປັນອັນຕະລາຍຕໍ່ພືດ, ສຸຂະພາບຂອງຄົນ-ສັດ ແລະ ສິ່ງແວດລ້ອມ.

### ມາດຕາ 37 ການອະນຸລັກຄວາມອຸດົມສົມບູນຂອງດິນກະສິກຳ

ການອະນຸລັກຄວາມອຸດົມສົມບູນຂອງດິນກະສິກຳ ແມ່ນ ການຮັກສາສະພາບທາງທຳມະຊາດຂອງດິນ ບໍ່ໃຫ້ເຊື່ອມຄຸນ ເປັນຕົ້ນ ບໍ່ໃຫ້ດິນສູນເສຍໂຄງສ້າງ, ທາດອາຫານ ແລະ ລະບົບຊີວະວິທະຍາຂອງດິນ ທີ່ອາດເກີດ

ຂື້ນເພາະ ການເຊາະເຈື່ອນ, ການໃຊ້ດິນຢ່າງຕໍ່ເນື່ອງ ໂດຍຂາດການປັບປຸງດິນ, ທີ່ຕິດພັນກັບການຮັກສາປ່າ ແລະ ແຫຼ່ງນໍ້າໄວ້ກັບທີ່ດິນ.

**ມາດຕາ 38 ການນຳໃຊ້ດິນທົດລອງ ແລະ ສາທິດອັດຕາຝຸ່ນ**

ການນຳໃຊ້ດິນທົດລອງ ແລະ ສາທິດອັດຕາຝຸ່ນ ແມ່ນ ການຊອກຮູ້ອັດຕາຝຸ່ນທີ່ເໝາະສົມຕໍ່ກັບການປູກພືດ ໃນດິນແຕ່ລະປະເພດ ເມື່ອໄດ້ອັດຕາຝຸ່ນທີ່ເໝາະສົມແລ້ວ ກໍ່ສາທິດໃນເຂດຕ່າງໆ ທີ່ມີປະເພດດິນດຽວກັນ ເມື່ອການສາທິດໄດ້ປະສິດທິຜົນ ກໍ່ແນະນຳ ແລະ ຂະຫຍາຍ ອັດຕາການນຳໃຊ້ຝຸ່ນ ອອກສູ່ຊາວກະສິກອນຢ່າງກວ້າງຂວາງ.

**ມາດຕາ 39 ການສ້າງຕົວແບບ ການຈັດການ ດິນ, ນໍ້າ ແລະ ຝຸ່ນ**

ການສ້າງຕົວແບບ ການຈັດການ ດິນ, ນໍ້າ ແລະ ຝຸ່ນ ແມ່ນ ການສ້າງຄວາມເຂັ້ມແຂງ ໃຫ້ຊາວກະສິກອນ ໃນພື້ນທີ່ ທີ່ມີຄວາມສ່ຽງ ຈາກໄພທຳມະຊາດ ເປັນຕົ້ນ ເຂດແຫ້ງແລ້ງ, ດິນມີຄວາມອຸດົມສົມບູນຕໍ່າ, ໂດຍການຖ່າຍທອດ ເຕັກນິກການຈັດການ ດິນ, ນໍ້າ ແລະ ຝຸ່ນ ເພື່ອໃຫ້ສາມາດດຳເນີນການຜະລິດ ໃນພື້ນທີ່ດັ່ງກ່າວ ຢ່າງມີປະສິດທິຜົນ ແລະ ເປັນບ່ອນຖ່າຍທອດບົດຮຽນ ໃຫ້ແກ່ກະສິກອນອື່ນໄດ້.

**ມາດຕາ 40 ການສ້າງອາສາສະໝັກໝໍດິນ**

ການສ້າງອາສາສະໝັກໝໍດິນ ແມ່ນ ການເລືອກເອົາຕົວແທນຂອງຊາວກະສິກອນ ທີ່ມີຄວາມສະໝັກໃຈ ບ້ານລະ ໜຶ່ງ ຫາ ສາມ ທ່ານ ມາຝຶກອົບຮົມ ກ່ຽວກັບເຕັກນິກ ການຈັດການ ດິນ, ນໍ້າ, ຝຸ່ນ ຕໍ່ການປູກພືດ ແລະ ນຳພາຊາວກະສິກອນປະຕິບັດຕົວຈິງ ເພື່ອຊ່ວຍພັດທະນາທີ່ດິນໃຫ້ມີປະສິດທິຜົນສູງ.

## ໝວດທີ 7
## ການນຳໃຊ້ທີ່ດິນກະສິກຳ

**ມາດຕາ 41 ການນຳໃຊ້ທີ່ດິນກະສິກຳ**

ການນຳໃຊ້ທີ່ດິນກະສິກຳ ແມ່ນ ການນຳໃຊ້ທີ່ດິນປູກເຂົ້າ, ປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ, ປູກໄມ້ໃຫ້ໝາກ, ລ້ຽງສັດ ແລະ ປະມົງ, ການຄົ້ນຄວ້າທົດລອງດ້ານກະສິກຳ ຕາມເຂດທີ່ດິນກະສິກຳ ທີ່ໄດ້ກຳນົດ ລວມທັງດິນກະສິກຳອື່ນໆ ເປັນຕົ້ນ ດິນລານຕາກ, ໂຮງງານປຸງແຕ່ງກະສິກຳຂັ້ນຕົ້ນ.

**ມາດຕາ 42 ການນຳໃຊ້ທີ່ດິນປູກເຂົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນປູກເຂົ້າ ຕ້ອງນຳໃຊ້ທີ່ດິນດັ່ງກ່າວ ເພື່ອເປົ້າໝາຍການປູກເຂົ້າ ແລະ ການປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນເທົ່ານັ້ນ ເປັນຕົ້ນ ພືດຕະກຸນຖົ່ວ, ພືດຜັກ ໂດຍມີການປັບປຸງດິນ ແລະ ເຮັດການຜະລິດຢ່າງຕໍ່ເນື່ອງ, ບໍ່ປະເປັນເຮື້ອ.

**ມາດຕາ 43 ການນຳໃຊ້ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ຕ້ອງນຳໃຊ້ທີ່ດິນດັ່ງກ່າວ ເພື່ອເປົ້າໝາຍ ປູກພືດທີ່ມີອາຍຸຕໍ່າກ່ວາ ໜຶ່ງປີລົງມາ ເປັນຕົ້ນ ສາລີ, ຖົ່ວ, ໝາກເດືອຍ, ອ້ອຍ, ຝ້າຍ, ໝາກງາ ໂດຍມີການປັບປຸງດິນ ແລະ ເຮັດການຜະລິດຢ່າງຕໍ່ເນື່ອງ, ບໍ່ປະເປັນເຮື້ອ.

**ມາດຕາ 44 ການນຳໃຊ້ທີ່ດິນປູກໄມ້ໃຫ້ໝາກ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງສິດນຳໃຊ້ທີ່ດິນປູກໄມ້ໃຫ້ໝາກ ຕ້ອງນຳໃຊ້ທີ່ດິນດັ່ງກ່າວ ເພື່ອເປົ້າໝາຍ ປູກພືດທີ່ມີອາຍຸຫຼາຍກ່ວາໜຶ່ງປີຂຶ້ນໄປ ເປັນຕົ້ນ ໝາກມ່ວງ, ໝາກລຳໄຍ, ໝາກມີ້, ໝາກຂາມ, ໝາກກ້ຽງ ໂດຍມີການປັບປຸງດິນ ແລະ ເຮັດການຜະລິດຢ່າງຕໍ່ເນື່ອງ, ບໍ່ປະໃຫ້ຮົກເຮື້ອ.

**ມາດຕາ 45 ການນຳໃຊ້ທີ່ດິນລ້ຽງສັດ ແລະ ປະມົງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງສິດນຳໃຊ້ ທີ່ດິນລ້ຽງສັດ ແລະ ປະມົງ ຕ້ອງນຳໃຊ້ທີ່ດິນດັ່ງກ່າວ ເພື່ອເປົ້າໝາຍການລ້ຽງ ແລະ ຂະຫຍາຍແນວພັນສັດ ແລະ ສັດນ້ຳ ເປັນຕົ້ນ ງົວ, ຄວາຍ, ໝູ, ແບ້, ປາ, ກຸ້ງ ໂດຍມີການອານຸລັກ, ປັບປຸງດິນ, ປັບປຸງນ້ຳ ແລະ ເຮັດການຜະລິດຢ່າງຕໍ່ເນື່ອງ.

**ມາດຕາ 46 ການກຳນົດເນື້ອທີ່ດິນກະສິກຳສຳລັບການນຳໃຊ້**

ການກຳນົດເນື້ອທີ່ດິນກະສິກຳສຳລັບການນຳໃຊ້ ແມ່ນ ການກຳນົດເນື້ອທີ່ຕໍ່ແຮງງານການຜະລິດຂອງຄອບຄົວໂດຍໃຫ້ສອດຄ່ອງກັບສະພາບຂອງທ້ອງຖິ່ນ, ຈຸດພິເສດທາງດ້ານພູມສັນຖານ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການກະສິກຳ ແລະ ປ່າໄມ້, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມໜາແໜ້ນຂອງພົນລະເມືອງ ເພື່ອຄວາມຍືນຍົງ ແລະ ມີປະສິດທິຜົນໃນຂອບເຂດເນື້ອທີ່ ດັ່ງນີ້:

1. ການນຳໃຊ້ດິນປູກເຂົ້າ ສູງສຸດ ບໍ່ເກີນ ໜຶ່ງ ເຮັກຕາ ຕໍ່ ໜຶ່ງ ແຮງງານໃນຄອບຄົວ;
2. ການນຳໃຊ້ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ສູງສຸດ ບໍ່ເກີນ ສາມ ເຮັກຕາ ຕໍ່ ໜຶ່ງ ແຮງງານໃນຄອບຄົວ;
3. ການນຳໃຊ້ດິນປູກໄມ້ໃຫ້ໝາກ ສູງສຸດ ບໍ່ເກີນ ສາມ ເຮັກຕາ ຕໍ່ ໜຶ່ງແຮງງານໃນຄອບຄົວ;
4. ການນຳໃຊ້ດິນປອກໂລ້ນ ຊຶ່ງຫັນມາປູກພືດພັນຫຍ້າລ້ຽງສັດ ສູງສຸດ ບໍ່ເກີນສິບຫ້າ ເຮັກຕາ ຕໍ່ ໜຶ່ງ ແຮງງານໃນຄອບຄົວ;
5. ການນຳໃຊ້ດິນລ້ຽງສັດ ສູງສຸດ ບໍ່ເກີນ ໜຶ່ງ ເຮັກຕາ ຕໍ່ ໜຶ່ງແຮງງານ ໃນຄອບຄົວ.
6. ການນຳໃຊ້ດິນກະສິກຳ ສຳລັບຜູ້ປະກອບການຜະລິດເປັນສິນຄ້າສາມາດປະຕິບັດຕາມດຳລັດສະບັບນີ້ ມາດຕາ 54 ແລະ 59.

## ໝວດທີ 8
## ການເຊົ່າ, ການສຳປະທານທີ່ດິນກະສິກຳ

**ມາດຕາ 47 ການເຊົ່າທີ່ດິນກະສິກຳ ທີ່ເປັນສິດນຳໃຊ້ຂອງພົນລະເມືອງລາວ**

ການເຊົ່າທີ່ດິນກະສິກຳ ທີ່ເປັນສິດນຳໃຊ້ຂອງພົນລະເມືອງລາວ ແມ່ນ ການຕົກລົງກັນລະຫວ່າງເຈົ້າຂອງທີ່ດິນ ແລະ ຜູ້ເຊົ່າ ເພື່ອນຳໃຊ້ທີ່ດິນເຂົ້າໃນກິດຈະການໃດໜຶ່ງ ເປັນຕົ້ນ ການປູກຝັງ, ລ້ຽງສັດ, ການປະມົງ ໃຫ້ເກີດຜົນປະໂຫຍດ ຕໍ່ ສອງຝ່າຍ ຊຶ່ງການເຊົ່າຕ້ອງໄດ້ຮັບການຄົ້ນຄວ້າເຫັນດີ ແລະ ຢັ້ງຢືນຈາກຂະແໜງການກະສິກຳ ແລະ ປ່າໄມ້, ພາກສ່ວນທີ່ກ່ຽວຂ້ອງ, ຮັບປະກັນໄດ້ຄວາມປອດໄພທາງສັງຄົມ ແລະ ຄວາມໝັ້ນຄົງຂອງຊັບພະຍາກອນດິນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການເຊົ່າທີ່ດິນກະສິກຳທີ່ເປັນສິດນຳໃຊ້ຂອງພົນລະເມືອງລາວ ຕ້ອງ:

1. ມີບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

2. ມີບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;

3. ມີແຜນດຳເນີນງານ ໂດຍເລັງໃສ່ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມ ໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ;

4. ມີເອກະສານຢັ້ງຢືນສະຖານະພາບທາງດ້ານການເງິນ, ຈ່າຍຄ່າເຊົ່າ, ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເປັນຕົ້ນ ຄ່າຕິດຕາມກວດກາ ແລະ ປະເມີນຜົນ, ຄ່າການສຳຫຼວດວັດແທກ, ຄ່າວິໄຈດິນ, ຄ່າປັບໜ້າດິນ, ຄ່າບຳລຸງຟື້ນຟູດິນ, ຄ່າທຳນຽມອື່ນໆຕາມກົດໝາຍ ແລະ ລະບຽບການ;

5. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ.

**ມາດຕາ 48 ການປະເມີນ ລາຄາ ເຊົ່າທີ່ດິນກະສິກຳ**

ການປະເມີນລາຄາເຊົ່າທີ່ດິນກະສິກຳ ໃນແຕ່ລະເຂດ ແມ່ນ ມອບໃຫ້ ຂະແໜງການກະສິກຳ ແລະ ປ່າໄມ້ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນທ້ອງຖິ່ນ ເປັນຜູ້ຮັບຜິດຊອບໃນການຄົ້ນຄວ້າ ສົມທົບກັບ ເຈົ້າຂອງທີ່ດິນ (ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ) ເພື່ອຄົ້ນຄວ້າຄວາມເປັນເອກກະພາບດ້ານລາຄາໃນການເຊົ່າ ຕາມສະພາບເງື່ອນໄຂຂອງທ້ອງຖິ່ນ ແລ້ວສະເໜີໃຫ້ກັບອົງການປົກຄອງທ້ອງຖິ່ນ ຕາມແຕ່ລະຂັ້ນເພື່ອອະນຸຍາດ.

**ມາດຕາ 49 ການອະນຸຍາດເນື້ອທີ່ ແລະ ກຳນົດເວລາ ໃຫ້ເຊົ່າທີ່ດິນກະສິກຳ**

ການອະນຸຍາດເນື້ອທີ່ ແລະ ກຳນົດເວລາ ໃຫ້ເຊົ່າທີ່ດິນກະສິກຳ ແມ່ນ ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ສົມທົບກັບຂະແໜງ ທີ່ກ່ຽວຂ້ອງ ແລະ ໃຫ້ປະຕິບັດຕາມຂອບເຂດສິດ ດັ່ງນີ້:

1. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຮ່ວມກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້ານຳສະເໜີເຈົ້າເມືອງ ເພື່ອອະນຸຍາດໃຫ້ເຊົ່າທີ່ດິນກະສິກຳ ຮ້ອຍ ເຮັກຕາ ລົງມາ ຕໍ່ ໜຶ່ງກິດຈະການ ແລະ ກຳນົດເວລາ ການເຊົ່າ ສູງສຸດ ບໍ່ເກີນ ສາມປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີຕາມການຕົກລົງຂອງຄູ່ສັນຍາ ໂດຍໄດ້ຮັບການອະນຸຍາດຈາກອົງການປົກຄອງຂັ້ນເມືອງ;

2. ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ຮ່ວມກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້ານຳສະເໜີເຈົ້າແຂວງ ເພື່ອອະນຸຍາດໃຫ້ເຊົ່າທີ່ດິນກະສິກຳ ໜຶ່ງຮ້ອຍໜຶ່ງ ຫາ ຫ້າຮ້ອຍ ເຮັກຕາ ຕໍ່ໜຶ່ງກິດຈະການ ແລະ ກຳນົດເວລາ ການເຊົ່າ ສູງສຸດບໍ່ເກີນ ຫ້າປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ຕາມການຕົກລົງຂອງຄູ່ສັນຍາ ໂດຍໄດ້ຮັບການອະນຸຍາດຈາກອົງການປົກຄອງຂັ້ນແຂວງ, ນະຄອນຫຼວງ;

3. ກະຊວງກະສິກຳ ແລະ ປ່າໄມ້ ມີສິດອະນຸຍາດໃຫ້ເຊົ່າ ທີ່ດິນກະສິກຳ ຫ້າຮ້ອຍໜຶ່ງ ຫາ ໜຶ່ງພັນເຮັກຕາ ຕໍ່ ໜຶ່ງໂຄງການ ແລະ ກຳນົດເວລາ ການເຊົ່າ ສູງສຸດ ບໍ່ ເກີນ ສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍເປັນການເອກະພາບຈາກພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງ ຕາມການຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້, ຖ້າເນື້ອທີ່ ການເຊົ່າ ຫາກ ເກີນ ກວ່າ ໜຶ່ງພັນ ເຮັກຕາ ຕ້ອງ ມີການຕົກລົງຈາກລັດຖະບານ ຕາມການສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 50 ການສຳປະທານທີ່ດິນກະສິກຳຂອງລັດ**

ການສຳປະທານທີ່ດິນກະສິກຳຂອງລັດ ແມ່ນ ການອະນຸຍາດຂອງລັດ ໃຫ້ຜູ້ຂໍສຳປະທານ ນຳໃຊ້ທີ່ດິນໃນພື້ນທີ່ໃດໜຶ່ງ ທີ່ລັດໄດ້ຈັດສັນໄວ້ແລ້ວ ເປັນຕົ້ນ ທີ່ດິນສຳລັບການປູກຝັງ, ລ້ຽງສັດ ແລະ ການປະມົງ ເພື່ອດຳເນີນກິດຈະການລົງທຶນ ຕາມສັນຍາສຳປະທານ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຕ້ອງການສຳປະທານທີ່ດິນກະສິກຳຂອງລັດຕ້ອງ:

1. ມີບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

2. ມີບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ;

3. ມີແຜນດຳເນີນງານ ໂດຍເລັງໃສ່ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມ ໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ອື່ນໆ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ;

4. ມີເອກະສານຢັ້ງຢືນສະຖານະພາບທາງດ້ານການເງິນ,ຈ່າຍຄ່າສຳປະທານ, ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆເປັນຕົ້ນ ຄ່າຕິດຕາມກວດກາ ແລະ ປະເມີນຜົນ, ຄ່າການສຳຫຼວດວັດແທກ, ຄ່າວິໄຈດິນ, ຄ່າປັບໜ້າດິນ, ຄ່າບຳລຸງຟື້ນຟູດິນ, ຄ່າທຳນຽມອື່ນໆຕາມກົດໝາຍ ແລະ ລະບຽບການ;

5. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ.

**ມາດຕາ 51 ການອະນຸຍາດເນື້ອທີ່ ແລະ ເວລາ ໃຫ້ສຳປະທານທີ່ດິນກະສິກຳຂອງລັດ**

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ເປັນເຈົ້າການ ສົມທົບກັບ ຂະແໜງການກ່ຽວຂ້ອງ ເພື່ອຄົ້ນຄວ້າຄຳສະເໜີຂໍອະນຸຍາດເນື້ອທີ່ ແລະ ເວລາ ໃຫ້ສຳປະທານທີ່ດິນກະສິກຳຂອງລັດ ແລ້ວສະເໜີ ຕາມແຕ່ລະກໍລະນີດັ່ງນີ້:

1. ເຈົ້າແຂວງ ອະນຸຍາດໃຫ້ສຳປະທານທີ່ດິນກະສິກຳ ບໍ່ເກີນ ຮ້ອຍ ເຮັກຕາ ຕໍ່ ໜຶ່ງກິດຈະການ ແລະ ກຳນົດເວລາ ການສຳປະທານສູງສຸດ ບໍ່ ເກີນ ສິບຫ້າ ປີ.

2. ກະຊວງກະສິກຳ ແລະ ປ່າໄມ້ ອະນຸຍາດໃຫ້ສຳປະທານທີ່ດິນກະສິກຳ ແຕ່ໜຶ່ງຮ້ອຍ ເຮັກຕາ ຫາ ໜຶ່ງພັນເຮັກຕາ ຕໍ່ ໜຶ່ງໂຄງການ ແລະ ກຳນົດເວລາການສຳປະທານ ສູງສຸດ ບໍ່ ເກີນ ສາມສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ໂດຍເປັນການເອກະພາບກັບຂະແໜງການທີ່ກ່ຽວຂ້ອງ.

ໃນກໍລະນີຂໍອະນຸຍາດເນື້ອທີ່ ແລະ ເວລາ ໃຫ້ສຳປະທານທີ່ດິນກະສິກຳຂອງລັດ ເກີນກວ່າ ໜຶ່ງພັນເຮັກຕາ ຕ້ອງ ໄດ້ຮັບການອະນຸຍາດຈາກຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີ ຂອງລັດຖະບານ.

## ໝວດທີ 9
## ຖານຂໍ້ມູນຂ່າວສານທີ່ດິນກະສິກຳ

**ມາດຕາ 52 ຖານຂໍ້ມູນຂ່າວສານທີ່ດິນກະສິກຳ**

ຖານຂໍ້ມູນຂ່າວສານທີ່ດິນກະສິກຳ ແມ່ນ ບ່ອນເກັບກຳຂໍ້ມູນຂ່າວສານກ່ຽວກັບທີ່ດິນ ເປັນຕົ້ນ ຂໍ້ມູນການສຳຫຼວດ, ການວາງແຜນ, ການວິໄຈດິນ, ຜົນການຄົ້ນຄວ້າທົດລອງອັດຕາຝຸ່ນ, ການຕິດຕາມ-ຢັ້ງຢືນການນຳໃຊ້, ນິຕິກຳ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ຖານຂໍ້ມູນຂ່າວສານ ກ່ຽວກັບທີ່ດິນກະສິກຳ ໂດຍເຊື່ອມກັບລະບົບຂໍ້ມູນຂ່າວສານທີ່ດິນແຫ່ງຊາດ ດ້ວຍການປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຮັບປະກັນຄຸນນະພາບ, ຄວາມສະດວກ, ທັນການ, ວ່ອງໄວ, ຊັດເຈນ ແລະ ມີປະສິດທິຜົນ ລວມທັງໃຫ້ການບໍລິການເຜີຍແຜ່ຕ່າງໆ.

**ມາດຕາ 53 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນຂ່າວສານທີ່ດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນຂ່າວສານທີ່ດິນກະສິກຳໃນຖານຂໍ້ມູນຂ່າວສານທີ່ດິນກະສິກຳ ໂດຍໃຫ້ເສຍຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບການ ຍົກເວັ້ນຂໍ້ມູນທີ່ດິນທີ່ນຳໃຊ້ເຂົ້າໃນໂຄງການຂອງລັດ ແລະ ການສຶກສາ.

## ໝວດທີ 10
## ສິດ ແລະ ພັນທະຂອງຜູ້ນຳໃຊ້ທີ່ດິນກະສິກຳ

**ມາດຕາ 54 ສິດຂອງຜູ້ນຳໃຊ້ທີ່ດິນກະສິກຳ**

ຜູ້ນຳໃຊ້ທີ່ດິນກະສິກຳ ມີສິດ ດັ່ງນີ້:

1. ນຳໃຊ້ທີ່ດິນກະສິກຳ ທີ່ເປັນສິດນຳໃຊ້ທີ່ດິນຂອງຕົນ ຫຼື ໄດ້ຮັບອະນຸຍາດໃຫ້ນຳໃຊ້ຕາມກົດໝາຍ;
2. ພັດທະນາທີ່ດິນ ໃຫ້ມີຄວາມອຸດົມສົມບູນ ເພື່ອເພີ່ມມູນຄ່າຂອງການຜະລິດ;
3. ໄດ້ຮັບຂໍ້ມູນຂ່າວສານທາງດ້ານວິຊາການກະສິກຳ;
4. ໄດ້ຮັບໃບຢັ້ງຢືນການນຳໃຊ້, ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ;
5. ໄດ້ຮັບຜົນປະໂຫຍດຈາກການຜະລິດຂອງຕົນ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ພັນທະຂອງຜູ້ນຳໃຊ້ທີ່ດິນກະສິກຳ**

ຜູ້ນຳໃຊ້ທີ່ດິນກະສິກຳ ມີພັນທະ ດັ່ງນີ້:

1. ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງຕາມເປົ້າໝາຍ, ຕໍ່ເນື່ອງ, ບໍ່ປະໃຫ້ທີ່ດິນຮົກເຮື້ອ, ເປົ່າຫວ່າງຕໍ່ເນື່ອງຫຼາຍປີ;
2. ບໍ່ສ້າງຄວາມເສຍຫາຍ ໃຫ້ແກ່ຄຸນນະພາບຂອງດິນ ແລະ ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ;
3. ປົກປັກຮັກສາທີ່ດິນກະສິກຳ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເຊື່ອມໂຊມ;
4. ປັບປຸງຄຸນນະພາບດິນກະສິກຳ ໃຫ້ມີຄວາມອຸດົມສົມບູນ ແລະ ເໝາະສົມສຳລັບການຜະລິດກະສິກຳ;
5. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 11
# ຂໍ້ຫ້າມ

**ມາດຕາ 56 ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ຈັບຈອງ, ບຸກເບີກທີ່ດິນກະສິກໍາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
2. ນໍາໃຊ້ທີ່ດິນກະສິກໍາບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ກົດໝາຍ ຫຼື ປະປ່ອຍດິນເປັນເຮື້ອ;
3. ບຸກລຸກ ຫຼື ຕັ້ງຖິ່ນຖານໃສ່ທີ່ດິນກະສິກໍາ ໂດຍບໍ່ໄດ້ຮັບອະນຸຍາດ ຕາມກົດໝາຍ ແລະ ລະບຽບການ;
4. ຫັນປ່ຽນທີ່ດິນກະສິກໍາ ໂດຍບໍ່ໄດ້ຮັບອະນຸຍາດ;
5. ປອມແປງເອກະສານ ກ່ຽວກັບທີ່ດິນກະສິກໍາ;
6. ລະເມີດສັນຍາ ຫຼື ຊື້ຂາຍສິດນໍາໃຊ້ທີ່ດິນ ເຊົ່າ ແລະ ສໍາປະທານທີ່ດິນກະສິກໍາ;
7. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ພະນັກງານຄຸ້ມຄອງທີ່ດິນ;
8. ຍ້າຍ, ປ່ຽນແປງ ແລະ ທໍາລາຍຫຼັກໝາຍເຂດທີ່ດິນກະສິກໍາ;
9. ຖົມ, ຂຸດຄົ້ນທີ່ດິນກະສິກໍາ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
10. ນໍາໃຊ້ກົນຈັກໜັກເຂົ້າໃນການກຽມດິນໃນເຂດພື້ນທີ່ຄ້ອຍຊັນເກີນສິບຫ້າສ່ວນຮ້ອຍ;
11. ສ້າງມົນລະພິດ ຕໍ່ທີ່ດິນກະສິກໍາ ແລະ ສິ່ງແວດລ້ອມ;
12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 57 ຂໍ້ຫ້າມສໍາລັບພະນັກງານທີ່ກ່ຽວຂ້ອງ**

ຫ້າມພະນັກງານທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດອໍານາດ, ຕໍາແໜ່ງ, ໜ້າທີ່ຂອງຕົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ຄະນະພັກພວກ,ຈຸ້ມເຈື້ອ ແລະ ຍາດພີ່ນ້ອງ;
2. ທວງເອົາ, ຂໍເອົາ ແລະ ຮັບເອົາ ສິນບົນ;
3. ຢັ້ງຢືນ ຫຼື ອອກເອກະສານ ກ່ຽວກັບທີ່ດິນກະສິກາ ໂດຍບໍ່ຖືກຕ້ອງ ຕາມລະບຽບການ;
4. ປອມແປງເອກະສານກ່ຽວກັບທີ່ດິນກະສິກໍາ, ລາຍເຊັນ, ຕາປະທັບ;
5. ໃຊ້ສິດ ຫຼື ໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທໍາຂອງປະຊາຊົນ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ;
6. ເມີນເສີຍ, ເລີນເລີ້ ຕໍ່ການປະຕິບັດໜ້າທີ່, ກົດໜ່ວງ, ຖ່ວງດຶງການພິຈາລະນາເອກະສານຕ່າງໆ ກ່ຽວກັບທີ່ດິນກະສິກໍາ;
7. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທໍາ, ລໍາອຽງ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ລວມໝູ່;
8. ເປັນນາຍໜ້າ, ທີ່ປຶກສາໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກາ;
9. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

10. ທຳລາຍຫຼັກຖານ, ເອກະສານກ່ຽວກັບທີ່ດິນກະສິກຳ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກໝາຍເຂດທີ່ດິນກະສິກຳ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 12
## ການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ

### ມາດຕາ 58 ອົງການຄຸ້ມຄອງ ແລະ ກວດກາວຽກງານທີ່ດິນກະສິກຳ

ລັດຖະບານ ຄຸ້ມຄອງວຽກງານທີ່ດິນກະສິກຳ ຕາມຫຼັກການລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ, ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທີ່ດິນກະສິກຳ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ;
4. ຈຸງານກະສິກຳ ແລະ ປ່າໄມ້ບ້ານ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

### ມາດຕາ 59 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້

ໃນການຄຸ້ມຄອງວຽກງານທີ່ດິນກະສິກຳ ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ ເພື່ອນຳສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ ໃຫ້ກາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ;

4. ສຳຫຼວດ ແລະ ສ້າງແຜນການນຳໃຊ້ທີ່ດິນກະສິກຳຂັ້ນສູນກາງ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ຮັບຮອງ;

5. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້, ການເຊົ່າ ແລະ ສຳປະທານ ທີ່ດິນກະສິກຳ ໃນຂອບເຂດທົ່ວປະເທດ;

6. ສ້າງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານທີ່ດິນກະສິກຳ ຢ່າງເປັນປົກກະຕິ;

7. ສ້າງປື້ມຕິດຕາມການນຳໃຊ້ທີ່ດິນກະສິກຳ, ໃບຢັ້ງຢືນການນຳໃຊ້ ແລະ ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;

8. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ທາງດ້ານວິຊາການ ໃນການອະນຸມັດໃຫ້ເຊົ່າ, ສໍາປະທານ, ການປ່ຽນເປົ້າໝາຍການນໍາໃຊ້ ແລະ ການຫັນປ່ຽນທີ່ດິນກະສິກໍາເປັນທີ່ດິນປະເພດອື່ນ;

9. ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນໍາໃຊ້ຖານຂໍ້ມູນຂ່າວສານ ທີ່ດິນກະສິກໍາ ຢ່າງລວມສູນ ໃນທົ່ວປະເທດ ພ້ອມທັງສະໜອງຂໍ້ມູນ ກ່ຽວກັບການນໍາໃຊ້ທີ່ດິນກະສິກໍາ ໃຫ້ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ;

10. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກໍາ;

11. ປະສານສົມທົບກັບ ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດວຽກງານທີ່ດິນກະສິກໍາ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນກະສິກໍາ;

13. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ທີ່ດິນກະສິກໍາ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ**

ໃນການຄຸ້ມຄອງວຽກງານທີ່ດິນກະສິກໍາ ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກໍາ ໃຫ້ກາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບວຽກງານທີ່ດິນກະສິກໍາ ເພື່ອສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກໍາ;

4. ສໍາຫຼວດ ແລະ ສ້າງແຜນການນໍາໃຊ້ທີ່ດິນກະສິກໍາຂັ້ນທ້ອງຖິ່ນ ໂດຍປະສານສົມທົບກັບພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສະເໜີອົງການປົກຄອງຂັ້ນແຂວງ ຮັບຮອງ;

5. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນໍາໃຊ້, ການເຊົ່າ ແລະ ສໍາປະທານ ທີ່ດິນກະສິກໍາ;

6. ສະເໜີ ສ້າງ, ຍົກລະດັບ ແລະ ນໍາໃຊ້ບຸກຄະລາກອນກ່ຽວກັບວຽກງານທີ່ດິນກະສິກໍາ ຢ່າງເປັນປົກກະຕິ;

7. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ທາງດ້ານວິຊາການ ໃນການອະນຸມັດໃຫ້ເຊົ່າ, ສໍາປະທານ, ການປ່ຽນເປົ້າໝາຍການນໍາໃຊ້ ແລະ ການຫັນປ່ຽນທີ່ດິນກະສິກໍາເປັນທີ່ດິນປະເພດອື່ນ;

8. ເກັບກໍາ ແລະ ສັງລວມ ຂໍ້ມູນທີ່ດິນກະສິກໍາ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກໍາ;

10. ປະສານສົມທົບກັບ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກ, ອົງການທຽບເທົ່າ ພະແນກ ແຂວງ, ນະຄອນຫຼວງ, ອົງການປົກຄອງເມືອງ ໃນການປະຕິບັດວຽກງານທີ່ດິນກະສິກໍາ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນກະສິກຳ ຕາມການມອບໝາຍ ຂອງຂັ້ນເທິງ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ທີ່ດິນກະສິກຳ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ໃນການຄຸ້ມຄອງວຽກງານທີ່ດິນກະສິກຳ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ , ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ ໃຫ້ກາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;

2. ເຂົ້າຮ່ວມຄົ້ນຄວ້າ ສ້າງລະບຽບການ ກ່ຽວກັບວຽກງານທີ່ດິນກະສິກຳ ເພື່ອສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ;

4. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້, ການເຊົ່າ ແລະ ສຳປະທານ ທີ່ດິນກະສິກຳ;

5. ສະເໜີ ສ້າງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນກ່ຽວກັບວຽກງານທີ່ດິນກະສິກຳ ຢ່າງເປັນປົກກະຕິ;

6. ສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳຂັ້ນບ້ານ;

7. ອອກປຶ້ມຕິດຕາມການນຳໃຊ້ທີ່ດິນກະສິກຳ, ໃບຢັ້ງຢືນການນຳໃຊ້ ແລະ ໃບຢັ້ງຢືນການພັດທະນາທີ່ດິນກະສິກຳ ໃຫ້ແກ່ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ ຕາມລະບຽບການ;

8. ເກັບກຳ ແລະ ສັງລວມ ຂໍ້ມູນທີ່ດິນກະສິກຳ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກຳ;

10. ປະສານສົມທົບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການ, ອົງການທຽບເທົ່າຫ້ອງການ ເມືອງ, ເທດສະບານ, ນະຄອນ, ອົງການປົກຄອງບ້ານ ໃນການປະຕິບັດວຽກງານທີ່ດິນກະສິກຳ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ທີ່ດິນກະສິກຳ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານທີ່ດິນກະສິກຳ ຈຸງານກະສິກຳ ແລະ ປ່າໄມ້ ບ້ານ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທີ່ດິນກະສິກຳ;

3. ຊຸກຍູ້ ແລະ ຕິດຕາມ ການນຳໃຊ້ທີ່ດິນ ຂອງຊາວກະສິກອນ ພາຍໃນບ້ານ;

4. ເຂົ້າຮ່ວມ ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານທີ່ດິນກະສິກຳ;

5. ເຂົ້າຮ່ວມ ການສຳຫຼວດ ແລະ ວາງແຜນການນຳໃຊ້ທີ່ດິນກະສິກຳ;

6. ເຂົ້າຮ່ວມ ການຕິດຕາມ ແລະ ຢັ້ງຢືນ ການນຳໃຊ້ທີ່ດິນກະສິກຳ ລວມທັງ ການຢັ້ງຢືນການພັດທະນາ ໃຫ້ແກ່ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ;

7. ເຂົ້າຮ່ວມໄກ່ເກ່ຍບັນຫາ ແລະ ຂໍ້ຂັດແຍ່ງ ກ່ຽວກັບທີ່ດິນກະສິກຳ ພາຍໃນບ້ານ;

8. ລາຍງານການຈັດຕັ້ງປະຕິບັດວຽກງານ  ທີ່ດິນກະສິກຳ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃນການຮ່ວມມື ແລະ ເຂົ້າຮ່ວມ ໃນວຽກງານທີ່ດິນກະສິກຳ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 64 ເນື້ອໃນການກວດກາທີ່ດິນກະສິກຳ**

ການກວດກາວຽກງານທີ່ດິນກະສິກຳ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບທີ່ດິນກະສິກຳ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການ ແລະ ພະນັກງານຄຸ້ມຄອງວຽກງານທີ່ດິນກະສິກຳ;

3. ການນຳໃຊ້ທີ່ດິນກະສິກຳ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ຂອງພະນັກງານທີ່ກ່ຽວຂ້ອງ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ.

**ມາດຕາ 65 ຮູບການກວດກາທີ່ດິນກະສິກຳ**

ການກວດກາທີ່ດິນກະສິກຳ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະຕິບັດຢ່າງໜ້ອຍ ສອງ ຄັ້ງຕໍ່ປີ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ;

3. ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

4. ການກວດກາ ສາມາດດຳເນີນທັງດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ໝວດທີ 13
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 66 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 67 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 14
## ບົດບັນຍັດສຸດທ້າຍ

**ມາດຕາ 68 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ, ຈັດຕັ້ງ, ເຜີຍແຜ່ ແລະ ຊຸກຍູ້ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ແລະ ໄດ້ຮັບຜົນດີ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.

**ມາດຕາ 69 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**